**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ແຂວງບໍ່ແກ້ວ

ເຈົ້າແຂວງ

ເລກທີ 789 /ຈຂ

ບໍ່ແກ້ວ, ວັນທີ 11 ກໍລະກົດ 2016.

# ຄຳສັ່ງ

## ວ່າດ້ວຍການຫ້າມຊື້-ຂາຍ, ຫ້າມນຳເຂົ້າ ແລະ ຫ້າມນຳໃຊ້ຢາຂ້າຫຍ້າ, ຢາປາບສັດຕູພືດ ຝຸ່ນວິທະຍາສາດບາງຊະນິດ ທີ່ບໍ່ຖືກຕ້ອງຕາມລະບຽບການ ແລະ ບໍ່ໄດ້ຮັບການອະນຸຍາດ ຈາກ ພາກສ່ວນທີ່ກ່ຽວຂ້ອງ

ເຖິງ: ບັນດາທ່ານຫົວໜ້າພະແນກການ, ສອງກອງບັນຊາການ ປກສ - ປກຊ ແຂວງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ສະພາປະຊາຊົນແຂວງ, ອຳນວຍການໂຮງຮຽນ - ໂຮງໝໍ, ບັນດາວິສາຫະກິດຂອງລັດ ແລະ ເອກະຊົນ, ສະພາບໍລິຫານເຂດພິເສດສາມຫຼ່ຽມຄຳ, ຫ້າງຮ້ານ, ຊາວກະສິກອນຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນແຂວງບໍ່ແກ້ວ.

- ອີງຕາມ ກົດໝາຍກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013 ວ່າດ້ວຍການຄຸ້ມຄອງຝຸ່ນ ໃນ ສປປລາວ.
- ອີງຕາມ ຄຳສັ່ງ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ເລກທີ 2592/ກປ, ລົງວັນທີ 15 ສິງຫາ 2014 ວ່າດ້ວຍການຄຸ້ມຄອງກວດກາຝຸ່ນ, ແນວພັນພືດ, ຢາຂ້າຫຍ້າ ແລະ ຢາປາບສັດຕູພືດອື່ນໆ ທີ່ນຳໃຊ້ຢູ່ໃນ ສປປ ລາວ.
- ອີງຕາມ ການສະເໜີ ຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 2792/ກຊສ ລົງວັນທີ 30 ພຶດສະພາ 2016 ວ່າດ້ວຍ ການໂຈະການນຳໃຊ້ຢາປາບສັດຕູພືດ ແລະ ຢາຂ້າຫຍ້າຢູ່ ພາຍໃນແຂວງບໍ່ແກ້ວ
- ອີງຕາມ ໃບສະເໜີ ຂອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ເລກທີ 0709/ກປຂ, ລົງວັນທີ 7 ກໍລະກົດ 2016

ໃນໄລຍະຜ່ານມາ ແຂວງບໍ່ແກ້ວ ໄດ້ສົມທົບກັບພະແນກກະສິກຳ ແລະ ປ່າໄມ້, ບັນດາພະແນກການອ້ອມຂ້າງແຂວງ ບັນດາເມືອງ ແລະ ການຈັດຕັ້ງທຸກຂັ້ນ ຕະຫຼອດຮອດອຳນາດການປົກຄອງບ້ານ ໄດ້ໃຫ້ການຮ່ວມມື ເປັນຢ່າງດີຕໍ່ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຈຳກັດການຊື້ - ຂາຍ, ການນຳຢາປາບສັດຕູພືດ, ຝຸ່ນວິທະຍາສາດທີ່ບໍ່ໄດ້ມາດຖານ ແລະ ເປັນຜົນສະທ້ອນຕໍ່ຊີວິດຂອງຄົນ, ສັດ ແລະ ສິ່ງແວດລ້ອມ ເຊິ່ງຜ່ານມາກໍ່ຄືປັດຈຸບັນຢູ່ ແຂວງບໍ່ແກ້ວ ຍັງມີການລັກລອບຈຳໜ່າຍ, ນຳເຂົ້າ, ຊື້ - ຂາຍ, ຢາຂ້າຫຍ້າ, ຢາປາບສັດຕູພືດ, ຝຸ່ນວິທະຍາສາດ ທີ່ບໍ່ໄດ້ມາດຖານ ມານຳໃຊ້ຢ່າງຊະຊາຍ ຢູ່ບັນດາເມືອງ ຕາມຊາຍແດນ ໂດຍບໍ່ຄຳນຶງເຖິງຜົນກະທົບຕໍ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມອັນໄດ້ສ້າງພາບພົດບໍ່ດີ ໃຫ້ແກ່ການຊີ້ນຳ - ນຳພາດ້ານເຕັກນິກວິຊາການ ຂອງພະແນກການທີ່ກ່ຽວຂ້ອງ.

ເພື່ອເຮັດໃຫ້ການຄຸ້ມຄອງ, ນໍາເຂົ້າ,ຈໍາໜ່າຍ, ຊື້ - ຂາຍ, ນໍາໃຊ້ຢາຂ້າຫຍ້າ, ຢາປາບສັດຕູພືດ, ຝຸ່ນວິທະຍາສາດ ຊະນິດຕ່າງໆ ໃຫ້ມີຄວາມຖືກຕ້ອງ ໄດ້ມາດຖານ ແລະ ປອດໄພສາມາດ ຮັບໃຊ້ເຂົ້າໃນວຽກງານການຜະລິດກະສິກໍາ ຢູ່ພາຍໃນແຂວງບໍ່ແກ້ວ.

## ເຈົ້າແຂວງໆ ບໍ່ແກ້ວ ອອກຄໍາສັ່ງ:

1) ໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ ຊີ້ນໍາຫ້ອງການກະສິກໍາປ່າ ແລະ ໄມ້ເມືອງ, ດ່ານປະເພນີ, ດ່ານສາກົນ ແລະ ໜ່ວຍງານປູກຝັງເມືອງ ໃນການຄຸ້ມຄອງກວດກາ ແລະ ຫ້າມນໍາເຂົ້າຢາຂ້າແມ້ງໄມ້, ຢາຂ້າເຊື້ອຣາ, ຢາຂ້າໜູ, ຢາຂ້າຫຍ້າ, ຢາຣົມຂ້າເຊື້ອພະຍາດ ແລະ ແມງໄມ້ ຕາມບັນຊີຍົກເລີກການນໍາໃຊ້ຢາປາບສັດຕູພືດ ໃນ ສປປ ລາວ ຈາກຕ່າງປະເທດ, ເຂົ້າພາຍໃນທ້ອງຖິ່ນຂອງຕົນຢ່າງເຂັ້ມງວດ.

2) ໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ ອອກໃບອະນຸຍາດນໍາເຂົ້າ ແລະ ຈໍາໜ່າຍຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດໂດຍອີງໃສ່ບັນຊີທີ່ໄດ້ຮັບການຈົດທະບຽນວິຊາການນໍາກົມປູກຝັງຢ່າງຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.

2.1 ສໍາລັບຝຸ່ນ, ຢາທີ່ນໍາເຂົ້າ ຕ້ອງມີສະຫຼາກຕິດເປັນພາສາລາວ ຫຼື ພາສາອັງກິດ.

2.2 ໃຫ້ມີຮ້ານຈໍາໜ່າຍ ສະເພາະຝຸ່ນ, ແນວພັນ ແລະ ຢາປາບສັດຕູພືດ, ບໍ່ໃຫ້ວາງປະປົນກັບສິນຄ້າ, ອຸປະໂພກ ແລະ ບໍລິໂພກອື່ນໆ.

3) ມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ ສົມທົບກັບ ( ພະແນກການທີ່ກ່ຽວຂ້ອງ ແລະ ອໍານາດການປົກຄອງທຸກຂັ້ນ ເປັນເຈົ້າການໃນການຄຸ້ມຄອງການນໍາໃຊ້ປະເພດສານເຄມີທຸກປະເພດ, ໃນແຕ່ລະທ້ອງຖິ່ນໃຫ້ເຂົ້າສູ່ລະບຽບການ ເພື່ອຮັບປະກັນບໍ່ໃຫ້ມີຜົນສະທ້ອນຕໍ່ຊີວິດຂອງຄົນ, ສັດ, ຜົນສະທ້ອນຕໍ່ສິ່ງແວດລ້ອມ ແລະ ຜົນຜະລິດກະສິກໍາໃຫ້ມີຄວາມສະອາດ.

4) ບໍ່ອະນຸຍາດໃຫ້ໂຄງການພັດທະນາພາກລັດ, ພາກທຸລະກິດ ແລະ ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດນໍາເຂົ້າຝຸ່ນ ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າທີ່ບໍ່ໄດ້ ຈົດທະບຽນວິຊາການ ຕາມລະບຽບກົດໝາຍຂອງ ສປປ ລາວ.

5) ຢາຂ້າຫຍ້າ, ຢາປາບສັດຕູພືດ, ຝຸ່ນວິທະຍາສາດ ທີ່ຈະນໍາເຂົ້າ ແລະ ນໍາໃຊ້ ຕ້ອງໄດ້ຜ່ານການເຫັນດີຈາກເຈົ້າໜ້າທີ່ງກ່ຽວຂ້ອງກ່ອນ ຫຼື ຕ້ອງນອນຢູ່ໃນບັນຊີຂຶ້ນທະບຽນຢາປາບສັດຕູພືດ ແລະ ຝຸ່ນຂອງກົມປູກຝັງ ກ່ອນການນໍາເຂົ້າທຸກຄັ້ງຕ້ອງຂໍອະນຸຍາດຈາກພະແນກກະສິກໍາແຂວງ ສາກ່ອນ.

6) ມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ແລະ ເມືອງ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ເມືອງ, ຫ້ອງການພາສີເຂດ, ກອງບັນຊາການ ປກສ ແຂວງ ແລະ ເມືອງ, ພະແນກສາທາລະນະສຸກແຂວງ ແລະ ເມືອງ ເພື່ອຈັດຕັ້ງເປັນຄະນະຊີ້ນໍາ ແລະ ຄະນະກໍາມະການ ໃນການຕິດຕາມກວດກາບັນດາບໍລິສັດຕ່າງໆທີ່ດໍາເນີນປູກພືດ ອຸດສາຫະກໍາ, ຫ້າງຮ້ານ ແລະ ສະຖານທີ່ອື່ນໆ ເຫັນວ່າມີການນໍາເຂົ້າ, ຈໍາໜ່າຍ,ນໍາໃຊ້, ຊື້ - ຂາຍ, ຢາປາບສັດຕູພືດ ທີ່ບໍ່ໄດ້ຮັບອະນຸຍາດ ແລ້ວລາຍງານໃຫ້ຂັ້ນເທິງຕາມສາຍຕັ້ງ ແລະ ສາຍຂວາງຂອງຕົນຊາບເປັນແຕ່ລະໄລຍະ, ຖ້າບຸກຄົນໃດ ຫາກລະເມີດໃຫ້ປະຕິບັດດັ່ງນີ້:

6.1 ລະເມີດຄັ້ງທີ 1: ຍຶດສິນຄ້າ, ສຶກສາອົບຮົມ, ກ່າວເຕືອນ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ.

6.2 ລະເມີດຄັ້ງທີ 2: ຍຶດສິນຄ້າ, ປັບໃໝ 50% ຂອງມູນຄ່າສິນຄ້າຕາມລາຄາທ້ອງຕະຫຼາດໃນມື້ນັ້ນ ແລະ ບັນທຶກໄວ້ໃນປຶ້ມ ຕິດຕາມ.

6.3 ລະເມີດຄັ້ງທີ 3: ຍຶດສິນຄ້າ, ປັບໃໝສອງເທົ່າຂອງມູນຄ່າສິນຄ້າ ຕາມລາຄາທ້ອງຕະຫຼາດໃນມື້ນັ້ນ ແລະ ບັນທຶກໄວ້ໃນປື້ມຕິດຕາມ.

6.4 ການລະເມີດຈະເປັນຄັ້ງທີ 1,2 ແລະ 3 ກໍ່ຕາມ ຖ້າຫາກສິ່ງຜິນກະທົບຮ້າຍແຮງຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມມີການເສຍຫາຍຈາກການນຳໃຊ້ສານເຄມີ, ຢາຂ້າຫຍ້າ, ຢາປາບສັດຕູພືດ ຜູ້ລະເມີດຕ້ອງໄດ້ຮັບຜິດຊອບທົດແທນຄືນຄ່າເສຍຫາຍທັງໝົດ ແລະ ດຳເນີນຄະດີຕາມລະບຽບກົດໝາຍຂອງ ສປປ ລາວ ເຊັ່ນ: ສຳນວນຄະດີມອບໃຫ້ເຈົ້າໜ້າທີ່ກອງຄະດີ ປກສ ແຂວງ ຫຼື ເມືອງ ດຳເນີນການສືບສວນແລ້ວສົ່ງໃຫ້ອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງຕັດສິນ ຕາມແຕ່ລະກໍລະນີໜັກ ຫຼື ເບົາ.

7. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້, ບັນດາພະແນກການ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງເປັນເຈົ້າການ ຊີ້ນຳຂະແໜງຂອງຕົນ ແລະ ຈັດຕັ້ງປະຕິບັດຄຳສັ່ງ ສະບັບນີ້ ໃຫ້ມີຜົນສຳເລັດສູງ ຜ່ານການຈັດຕັ້ງປະຕິບັດ ແລະ ມີຂໍ້ສະດວກ, ຂໍ້ຫຍຸ້ງ ແລະ ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານຄະນະຊີ້ນຳຂັ້ນແຂວງ ຊາບເປັນປົກກະຕິ ເພື່ອພິຈາລະນາ ແລະ ແກ້ໄຂໃຫ້ຖືກຕ້ອງ ແລະ ທັນການ.

8. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງໄດ້ພິມລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ (15 ວັນ) ເປັນຕົ້ນໄປ.

ເຈົ້າແຂວງໆ ບໍ່ແກ້ວ

ດຣ.ຄຳພັນ ເຜີຍຍະວົງ

ບ່ອນສົ່ງ:

| | |
|---|---|
| 1.ຫ້ອງວ່າການປົກຄອງແຂວງ | 1 ສະບັບ |
| 2.ພະແນກກະສິກຳ ແລະ ປ່າໄມ້ | 1 ສະບັບ |
| 3.ພະແນກຍຸຕິທຳແຂວງ | 1 ສະບັບ |
| 4.ພະແນກສາທາແຂວງ | 1 ສະບັບ |
| 5.ພະແນກຖະແຫຼງຂ່າວ | 1 ສະບັບ |
| 6.ພະແນກອຸດສາຫະກຳ-ການຄ້າ | 1 ສະບັບ |
| 7.ພະແນກຊັບພະຍາກອນແຫຼ່ງນ້ຳ ແລະ ສິ່ງແວດລ້ອມ | 1 ສະບັບ |
| 8.ກອງບັນຊາການ ປກສ ແຂວງ | 1 ສະບັບ |
| 9.ຫ້ອງການກະສິກຳ ແລະ ປ່າໄມ້ເມືອງໆລະ | 1 ສະບັບ |
| 10. ຫ້ອງການສະພາເຂດ 5 | 1 ສະບັບ |
| 11. ພະແນກການເງິນແຂວງ | 1 ສະບັບ |
| 12.ສຳເນົາ | 1 ສະບັບ |